# ມິຊຊາອາທິດທີ 28 ກໍານົດທໍາມະດາ ປີ B
# ວັນອາທິດທີ 14 ຕຸລາ 2018



**ພຣະວໍລະສານໂດຍນັກບຸນມາກໂກ 10, 17-27**

ໃນເວລານັ້ນ, ເມື່ອພຣະເຢຊູເຈົ້າກໍາລັງເດີນທາງໄປກໍມີຄົນຜູ້ໜຶ່ງແລ່ນມາຫາຂາບລົງຕໍ່ໜ້າພຣະອົງທູນວ່າ: ພຣະອາຈານຜູ້ດີ, ຂ້ານ້ອຍຈະຕ້ອງເຮັດແນວໃດເພື່ອຈະໄດ້ຮັບສ່ວນໃນຊີວິດນິລັນດອນ? ພຣະເຢຊູເຈົ້າຕອບວ່າ: ເປັນຫຍັງເຈົ້າຈຶ່ງເອີ້ນເຮົາເປັນຜູ້ດີ. ບໍ່ມີໃຜດີນອກຈາກພຣະເຈົ້າແຕ່ຜູ້ດຽວ, ເຈົ້າກໍຮູ້ຈັກພຣະບັນຍັດດີຄື: ຢ່າຂ້າຄົນ, ຢ່າລ່ວງປະເວນີ, ຢ່າລັກຂະໂມຍ, ຢ່າໃສ່ຄວາມເຂົາ, ຢ່າທໍາຮ້າຍຜູ້ໃດ, ຈົ່ງນັບຖືບິດາມານດາຂອງເຈົ້າ. ຄົນຜູ້ນັ້ນຕອບວ່າ: ພຣະອາຈານ, ທຸກສິ່ງເຫລົ່ານີ້ຂ້ານ້ອຍໄດ້ຖືມາແຕ່ເວລາຍັງໜຸ່ມນ້ອຍແລ້ວ.

ພຣະເຢຊູເຈົ້າຈຶ່ງຈ້ອງຕາແນມເບິ່ງຄົນນັ້ນດ້ວຍຄວາມຮັກແພງ. ພຣະອົງກ່າວກັບເຂົາວ່າ: ເຈົ້າຍັງຂາດແນວໜຶ່ງ ຄືໃຫ້ເມືອຂາຍຊັບສົມບັດຂອງເຈົ້າແລະເອົາໄປທານຄົນທຸກຈົນ. ແລ້ວເຈົ້າຈະມີຊັບຢູ່ສະຫວັນ. ຈາກນັ້ນໃຫ້ເຈົ້າຕິດຕາມເຮົາມາ. ພໍໄດ້ຍິນຄວາມນີ້, ຄົນຜູ້ນັ້ນກໍມີຄວາມເສຍໃຈແລະຫລົບເມືອຢ່າງໂສກເສົ້າ. ຍ້ອນວ່າເຂົາເປັນຄົນຮັ່ງມີຫລາຍ.

ແລ້ວພຣະເຢຊູເຈົ້າຊົງເຫລືອດສາຍຕາໄປອ້ອມໆ ແລະກ່າວກັບພວກສາວົກວ່າ: ພວກທີ່ມີຊັບສົມບັດຫລາຍຈະເຂົ້າໃນອານາຈັກຂອງພຣະເຈົ້າໄດ້ຍາກ.

ພວກສາວົກງຶດງໍ້ໃນຄວາມເວົ້ານີ້. ພຣະເຢຊູເຈົ້າຊົງກ່າວຕໍ່ໄປວ່າ: ລູກທີ່ຮັກທັງຫລາຍເອີຍ, ເຂົ້າໃນອານາຈັກຂອງພຣະເຈົ້າເປັນການລໍາບາກແທ້! ເອົາອູດເຂົ້າຮູເຂັມຍັງງ່າຍກວ່າເອົາຄົນຮັ່ງມີເຂົ້າໃນອານາຈັກຂອງພຣະເຈົ້າ.

ພວກລູກສິດແຮງມີຄວາມປະຫລາດໃຈກວ່າອີກແລະເວົ້າກັນວ່າ: ດັ່ງນີ້, ຜູ້ໃດຈະເອົາຕົວຣອດໄດ້? ພຣະເຢຊູເຈົ້າແນມເບິ່ງພວກເຂົາກ່າວວ່າ: ສໍາລັບຄົນນັ້ນ ເປັນໄປບໍ່ໄດ້. ແຕ່ສໍາລັບພຣະເຈົ້າບໍ່ເປັນດັ່ງນັ້ນ. ຍ້ອນວ່າທຸກສິ່ງເປັນໄປໄດ້ສໍາລັບພຣະເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 10, 17-27**

ຄົນຮັ່ງມີທີ່ກ່າວໃນພຣະວໍລະສານວັນນີ້ໄດ້ມີຄວາມກະຕືລືລົ້ນຢາກພົບພຣະເຢຊູເຈົ້າເພື່ອຖາມພຣະອົງກ່ຽວກັບວິທີທາງທີ່ຈະໄດ້ຮັບຊີວິດນິລັນດອນ. ຍ້ອນຫຍັງຄົນຮັ່ງມີນີ້ຈຶ່ງຢາກພົບພຣະເຢຊູເຈົ້າ? ອາດຈະແມ່ນຍ້ອນເຂົາຢາກບອກໃຫ້ພຣະອົງຮູ້ເຖິງພຣະທຳບັນຍັດທີ່ເຂົາໄດ້ຖືແລະປະຕິບັດມາຕັ້ງແຕ່ຍັງໜຸ່ມນ້ອຍພຸ້ນ ເພື່ອຫວັງຈະໄດ້ຮັບຄຳຊົມເຊີຍຈາກພຣະເຢຊູເຈົ້າຜູ້ທີ່ເຂົາຮຽກວ່າເປັນອາຈານຜູ້ດີ. ຫລືອາດຈະແມ່ນຄົນຮັ່ງມີນີ້ຍັງມີຄວາມສົງໄສໃນສິ່ງທີ່ເຂົາປະຕິບັດມາ. ເພາະສະນັ້ນ, ເຂົາຈຶ່ງຖາມພຣະເຢຊູເຈົ້າວ່າ: ຕ້ອງເຮັດແນວໃດຈຶ່ງຈະໄດ້ຮັບມໍລະດົກອັນແມ່ນຊີວິດນິລັນດອນ? ສຳລັບພຣະເຢຊູເຈົ້າ, ຊີວິດນິລັນດອນບໍ່ແມ່ນສິ່ງທີ່ພວກເຮົາສາມາດໄດ້ມາດ້ວຍແຮງແລະສະຕິປັນຍາຂອງຕົນ. ແຕ່ຊີວິດນິລັນດອນເປັນຂອງຂັວນ, ເປັນພຣະຄຸນທີ່ພຣະເຈົ້າປະທານໃຫ້ມະນຸດ. ດັ່ງນັ້ນ, ມະນຸດບໍ່ສາມາດໄດ້ຮັບພຣະຄຸນນີ້ໂດຍອາໄສແຕ່ພາລະກຳລັງຂອງຕົນເທົ່ານັ້ນ. ເຖິງແມ່ນວ່າເຂົາຈະຖືພຣະທຳບັນຍັດທຸກປະການຢ່າງເຄັ່ງຄັດກໍຕາມ ແຕ່ຖ້າເຂົາບໍ່ອາໄສພຣະຄຸນພຣະເຈົ້າຊ່ວຍແລ້ວ ສິ່ງທີ່ເຂົາກະທຳໄປກໍບໍ່ມີຄວາມໝາຍຫຍັງ. ເພາະບັນຍັດທັງສິບຂໍ້ມີໄວ້ເພື່ອເປັນເສັ້ນທາງນຳພວກເຮົາໄປຫາພຣະເຈົ້າອັນແມ່ນຊີວິດນິລັນດອນ. ແລະເສັ້ນທາງຂອງພຣະເຢຊູເຈົ້າບໍ່ແມ່ນເສັ້ນທາງແຫ່ງການເປັນນາຍ, ເສັ້ນທາງແຫ່ງຄວາມຮັ່ງມີ. ແຕ່ແມ່ນເສັ້ນທາງແຫ່ງການຮັບໃຊ້, ການເສຍສະຫລະ ແລະທ້າຍສຸດ, ຄືການມອບທຸກສິ່ງທີ່ຕົນມີເຖິງແມ່ນກະທັ້ງຊີວິດຂອງຕົນກໍຕາມເພື່ອຄົນອື່ນ.

ອາດຈະແມ່ນສິ່ງນີ້ທີ່ຄົນຮັ່ງມີບໍ່ສາມາດກະທຳໄດ້. ເພາະເຂົາມີຊັບສົມບັດຫລາຍ. ແລະເຂົາບໍ່ສາມາດສະຫລະທຸກສິ່ງທີ່ເຂົາມີເພື່ອແຈກທານໃຫ້ຄົນທຸກຈົນຕາມທີ່ພຣະເຢຊູເຈົ້າໄດ້ແນະນຳເຂົາ. ດັ່ງນັ້ນ, ຄົນຮັ່ງມີນີ້ຈຶ່ງໄດ້ປະຕິເສດຄຳສະເໜີຂອງພຣະເຢຊູເຈົ້າດ້ວຍການຈາກໄປຢ່າງໂສກເສົ້າ.

ຈາກເຫດການນີ້ຈຶ່ງທຳໃຫ້ພວກລູກສິດທີ່ຕິດຕາມພຣະອົງມາມີຄວາມຢ້ານກົວແລະຖາມກັນວ່າ: ແມ່ນໃຜຈະໄດ້ຮັບຄວາມຣອດ? ແລະຄຳຕອບຂອງພຣະເຢຊູເຈົ້າຄື ສຳລັບມະນຸດເປັນໄປບໍ່ໄດ້ ແຕ່ສຳລັບພຣະເຈົ້າທຸກສິ່ງເປັນໄປໄດ້. ຄຳຕອບນີ້ບໍ່ໄດ້ເຈາະຈົງສຳລັບແຕ່ພວກສາວົກເທົ່ານັ້ນ ແຕ່ສຳລັບທຸກຄົນບໍ່ວ່າຈະຮັ່ງມີຫລືທຸກຈົນກໍຕາມ ຖ້າພວກເຮົາໄວ້ວາງໃຈໃນພຣະເຢຊູເຈົ້າແລະຕິດຕາມພຣະອົງໄປ ພວກເຮົາກໍຈະໄດ້ຮັບຊີວິດນິລັນດອນ.

ເພາະພຣະເຢຊູເຈົ້າກ່າວວ່າ: ບໍ່ມີໃຜໄປຫາພຣະບິດາເຈົ້າໄດ້ໂດຍບໍ່ຜ່ານທາງພຣະອົງ. ຍ້ອນພຣະອົງເປັນຫົນທາງ, ເປັນຄວາມຈິງແລະຊີວິດທີ່ຈະນຳພວກເຮົາໄປສູ່ຊີວິດອັນແທ້ຈິງ. ແຕ່ທັງນີ້ທັງນັ້ນ ກໍຂຶ້ນກັບການເລືອກແລະຕັດສິນໃຈຂອງພວກເຮົາ ວ່າພວກເຮົາຈະເລືອກພຣະເຈົ້າ ຫລືຄວາມຮັ່ງມີໃນໂລກນີ້. ພວກເຮົາຈະເລືອກຊີວິດນິລັນດອນ ຫລືເລືອກຊີວິດຊົ່ວຄາວບົນແຜ່ນດິນນີ້. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ